# ບົດທີ 17

## ຜູ້ຕາງໜ້າຂອງອານາຈັກ ພາກປາຍ: ການປະກາດປະຈຳບ້ານ

*ພະເຢຊູ ຄືອາຈານສອນໃຫຍ່ກວ່າອາຈານທຸກຄົນ ແລະ ພະອົງສັ່ງໃຫ້ພວກສາວົກທຸກຄົນອອກໄປ ປະຕິບັດຄຳທີ່ເຂົາໄດ້ ຮຽນມາແລ້ວ ຄືໃນ ມັດທາຍ 10:5-42*




*ກ່ອນທີ່ ພະເຢຊູ ຈະໃຫ້ພວກເຂົາອອກໄປປ່າວປະກາດ ພະອົງສອນເຂົາຢ່າງຄັກແນ່ໃນ ມັດທາຍ 10:5-42 ຄຳສອນນັ້ນຈະແຍກເປັນສາມສ່ວນໃຫຍ່ ແລະ ຫຼັງຈາກສ່ວນທີ່ສາມນັ້ນ ມີຕອນເພີ່ມອີກ ສອງຕອນ. ໂຄງຮ່າງນັ້ນແຍກເປັນສ່ວນໄດ້ດັ່ງຕໍ່ໄປນີ້ຄື:*

1. *ການໄປຢ້ຽມຄົນໃນບ້ານ (ຂໍ້ 5-15)*
2. *ການຕໍ່ສູ້ (ຂໍ້ 16-25)*
3. *ຈະປະເຊີນໜ້າຜູ້ຕໍ່ສູ້ຢ່າງໃດ (ຂໍ້ 26-33)*

   *ຕອນເພີ່ມ ກ. (ຂໍ້ 34-39)*

   *ຕອນເພີ່ມ ຂ. (ຂໍ້ 40-42)*

# ການໄປຢ້ຽມຄົນໃນບ້ານ

**1** ໃຫ້ອ່ານ ມັດທາຍ 10:5-15

ກ. ໃນຕອນພະຄຳພີນີ້ ພວກສາວົກເລີ້ມຕົ້ນປະຕິບັດງານຕາມຄຳສັ່ງຂອງ ພະເຢຊູ ລະຫວ່າງ ພວກໃດ ແມ່ນຊາດ ຍິວຂອງເຂົາເອງ ຫຼື ຄົນຕ່າງຊາດ? (ອ່ານ ມທ 10:5-6) ________

ຂ. ໃຫ້ອ່ານເລື່ອງດຽວກັນອີກໃນຂ່າວປະເສີດ ມາລະໂກ (ຕາມຂໍ້ອ້າງ) ມີຈັກຄູ່ອອກໄປ? __

**2** ກ. ເຂົາຕັ້ງຕົ້ນປ່າວປະກາດລະຫວ່າງຊາດຂອງເຂົາເອງ ແຕ່ຕໍ່ໄປໃນອານາຄົດເຂົາຈະປະກາດ ໄປເຖິງໃຜ? (ມທ 10:18) ________________________________________

ຂ. ພວກເຈົ້າເມືອງແລະກະສັດເປັນຊາດຍິວບໍ່? ____________________________

ຄ. ຫຼັງຈາກພະອົງຄືນພະຊົນ ພະເຢຊູ ສັ່ງໃຫ້ເຂົາໄປເຖິງຊາດໃດແດ່? ______________

**3** ການນີ້ເປັນບົດຮຽນທີ່ດີຝ່າຍເຮົາດ້ວຍ ໃນເມື່ອເວລາທີ່ເຮົາຈະຕັ້ງຕົ້ນປ່າວປະກາດເປັນການ ເລີ່ມທີ່ເຮົາຈະປ່າວ ປະກາດລະຫວ່າງຄົນທີ່ຮູ້ຈັກກັນດີກ່ອນ ຫຼັງຈາກເຮົາຊຳນານແລ້ວຈຶ່ງຈະ ໄປປະກາດທາງອື່ນກໍ່ໄດ້. ພວກ ສາວົກນັ້ນເປັນຄົນຍິວ

ກ. ພະເຢຊູ ໃຫ້ເຂົາປະກາດລະຫວ່າງຊາດໃດກ່ອນ? _________________________

ຂ. ແຕ່ອີກຕໍ່ໄປຫຼັງຈາກເຂົາມີປະສົບປະການແລ້ວ ພະເຢຊູ ຈະໃຫ້ເຂົາປ່າວປະກາດໄປຮອດ ໃສ? ________________________________________________________

**4** ເມື່ອຈະອອກໄປພວກສາວົກປະກາດວ່າຢ່າງໃດ? (ມັດທາຍ 10:7) ________________

**5** ເຊັ່ນດຽວກັນກັບ ພະເຢຊູ ພວກສາວົກເຜີຍແຜ່ຂ່າວປະເສີດໄປດ້ວຍເຫດການສອງຢ່າງໃດ? (ຕື່ມຄວາມທີ່ຂາດ ຕໍ່ໄປນີ້)

ກ. (ມັດທາຍ 10:7) ການປ່າວ ________________________________________

ຂ. (ມທ 10:8) ການອັດ _____________________________________________

**6** ພວກສາວົກຕິດຕາມ ພະເຢຊູ ໄປຄາວໜຶ່ງແລ້ວ ເຂົາເຫັນພະອົງປ່າວປະກາດພະທຳແລະເຫັນ ພະອົງເຮັດການ ອັດສະຈັນເລື່ອງນັ້ນເຮົາຮຽນມາແລ້ວໃນຫຼັກສູດ ມັດທາຍ ເຫຼັ້ມທີ 3 ນີ້ ພາກ ຂ. ແລະ ພາກ ຈ. ໃນເລື່ອງກົດລະບຽບຂອງອານາຈັກແລະຫຼັກຖານຂອງອານາຈັກດ້ວຍ.

ກ. ຂ່າວປະເສີດ ມັດທາຍ ບົດໃດແດ່ ສອນເລື່ອງກົດລະບຽບທີ່ພວກສາວົກຮັບມາຈາກພະເຢ ຊູເພື່ອຕໍ່ໄປຈະ ອອກໄປປະກາດ? ____________________________________

ຂ. ແມ່ນຂ່າວປະເສີດ ມັດທາຍ ບົດໃດແດ່ທີ່ເວົ້າເຖິງການອັດສະຈັນທີ່ ພະເຢຊູ ເຮັດ? _____

**7** ໃນຄຳເທດສະໜາຢູ່ຈ້າຍພູ ພະເຢຊູ ສອນພວກອັກຄະສາວົກຢ່າງບໍລິບູນເພື່ອເຂົາຈະອອກໄປ ສອນເລື່ອງອານາ ຈັກສະຫວັນຕໍ່ໄປ. ຂໍໃຫ້ທ່ານບອກຂໍ້ພະຄຳພີທີ່ ພະເຢຊູ ສອນເລື່ອງດັ່ງຕໍ່ໄປ ນີ້: (ໃຊ້ພະຄຳພີທີ່ໝາຍໄວ້ແຕ່ກ່ອນກໍ່ໄດ້)

ກ. ເລື່ອງຄວາມສຸກ ມັດທາຍ ບົດ 5 ຂໍ້ໃດເຖິງຂໍ້ໃດ? ___________________________

ຂ. ເລື່ອງການອ້ອນວອນ ມັດທາຍ ບົດ 6 ຂໍ້ໃດເຖິງຂໍ້ໃດ? _______________________

ຄ. ເລື່ອງການກ່າວໂທດຜູ້ອື່ນ ມັດທາຍ 7 ຂໍ້ໃດເຖິງຂໍ້ໃດ? ________________________

**8** ພວກສາວົກບໍ່ສາມາດທີ່ຈະອອກໄປປ່າວປະກາດນອກຈາກຈະໄດ້ຮັບຄຳສອນຂອງພະເຢຊູກ່ອນ ເຂົາອອກໄປ ປະຕິບັດວຽກງານຂອງພະອົງເຕັມໄປດ້ວຍຄວາມສັ່ງສອນທີ່ມາຈາກພະເຢຊູໂດຍກົງ. ທ່ານເອງຈະຮັບຄຳສັ່ງສອນຢ່າງດຽວກັນໄດ້ດ້ວຍຮຽນຮູ້ຈາກຄຳເທດສະໜາຂອງພະເຢຊູ ເໝືອນກັນ. ຄວາມສອນນັ້ນມີຂຽນໄວ້ໃນ ມັດທາຍ ບົດໃດແດ່? __________

**9** ແຕ່ຝ່າຍພວກສາວົກບໍ່ແມ່ນພຽງແຕ່ຈະເທດສະໜາຢ່າງດຽວ ແຕ່ເຂົາຍັງເຮັດການອັດສະຈັນອີກດ້ວຍ ທີ່ສະແດງ ຄວາມຮັກແລະພະຄຸນເໝືອນຢ່າງກັບພະເຢຊູ ໃນ ມັດທາຍ ບົດ 8 ແລະ 9 ຄື: ມັດທາຍ 5:44 ແລະ ມັດທາຍ 8:5-13 ທັງສອງຕອນອ້າງເຖິງຄວາມຮັກຕໍ່ຜູ້ທີ່ເປັນສັດຕູຂອງເຮົາ. ໃນພະຄຳພີສອງຕອນນັ້ນ

ກ. ຕອນໃດສອນດ້ວຍກິຈະການ? ________________________________________

ຂ. ຕອນໃດສອນດ້ວຍຄຳເວົ້າ? ________________________________________

**10** ກ. ພວກສາວົກຮ່ຳຮຽນດ້ວຍການຟັງຄຳເທດສະໜາຂອງໃຜ? ____________________

ຂ. ຄຳເທດສະໜານັ້ນເຫັນໃນ ມັດທາຍ ບົດໃດແດ່? ____________________________

ຄ. ເຂົາເລີຍເຫັນ ພະເຢຊູ ເຮັດຫຍັງ? ________________________________

ງ. ການນັ້ນມີຂຽນໄວ້ໃນ ມັດທາຍ ບົດໃດແດ່? ____________________________

**11** ພວກສາວົກຈຳເປັນຕ້ອງຝຶກຝົນຈາກ ພະເຢຊູ ກ່ອນຈະອອກໄປປ່າວປະກາດ

ກ. ໃນ ມທ 10:7 ແລະ 10:8 ແມ່ນຂໍ້ໃດທີ່ອ້າງເຖິງຄຳເວົ້າ? ____________________

ຂ. ຂໍ້ໃດອ້າງເຖິງການກະທຳ? ________________________________________

**12** ພະເຢຊູ ຮູ້ກ່ອນວ່າພວກສາວົກຈະມີຜູ້ຕໍ່ສູ້ຢູ່ສະເໝີ ແລ້ວພະອົງເຕືອນເຂົາເລື່ອງການນັ້ນກ່ອນ. ເຂົາຈຳເປັນຕ້ອງ ພົບຄວາມລຳບາກຫຼາຍຢ່າງ. ໃຫ້ທ່ານອ່ານ ມທ 10:9-10 ເຂົາຈະຕ້ອງທຸກຍາກໃນດ້ານໃດ? (ເລືອກ)

ກ. ເຂົາຈະໄປປະກາດແຕ່ສະເພາະຄົນຢິວ.

ຂ. ເຂົາຈຳເປັນຕ້ອງປະຕິບັດຕາມຄຳສັ່ງຂອງພະອົງ.

ຄ. ເຂົາຈະຕ້ອງຢູ່ດ້ວຍບໍ່ອາໄສວັດຖຸສິ່ງຂອງ.

**13** ກ. ພະເຢຊູເຕືອນໃຫ້ສາວົກຮີບໂຮມສົມບັດໄວ້ໃນສະຫວັນໃນ ມັດທາຍ ບົດ 6 ມີສາມຂໍ້ໃດ?

______________________________________________________________

ຂ. ພະເຢຊູ ເອງມີເຮືອນພັກບໍ່? (ມທ 8:20) ________________________________

**14** ພວກສາວົກຈຳເປັນຕ້ອງຮຽນຮູ້ຫຍັງຈາກ ພະເຢຊູ ເລື່ອງຊັບສົມບັດ? ________________

**15** ພະເຢຊູ ສອນວ່າ ພວກສາວົກຈະປ່າວປະກາດຈາກບ່ອນໃດເປັນຕົ້ນ? (ເລືອກ)

_______ ໂຮງທຳ. _______ ພະວິຫານ. _______ ບ້ານຄົນ.

**16** ເຖິງພະເຍຊູເອງບໍ່ມີເຮືອນກໍ່ຕາມແຕ່ພະອົງເຄີຍໃຊ້ເຮືອນຂອງຜູ້ອື່ນເປັນສູນກາງໃນການປ່າວປະກາດ

ກ. ໃນ ມັດທາຍ ບົດ 8 ພະເຍຊູ ໄປຢ້ຽມຄົນໃນເຮືອນຂອງສາວົກໃດ? ______________

ຂ. ໃນ ມັດທາຍ ບົດ 9 ເດ? ________________________________________

**17** ກ. ໃນ ກິຈະການ 20:20 ອາຈານໃດທີ່ອອກໄປເທດສະໜາຕາມບ້ານຕາມເຮືອນ? (ເບິ່ງ ກຈກ 20:16 ດ້ວຍ)________________________________________

ຂ. ພະເຍຊູເທດສະໜາໄປຕາມບ້ານຕາມເຮືອນ ອາຈານ ໂປໂລ ກໍ່ເທດສະໜາໄປຕາມບ້ານຕາມເຮືອນ. ແລ້ວ ທ່ານເອງເປັນການເໝາະສົມທີ່ທ່ານຈະເທດສະໜາຢູ່ໃສ? ________

**18** ພວກສາວົກໄປເຖິງບ້ານຂອງຊາດຢິວກ່ອນ ແຕ່ເຖິງວ່າເປັນຊາດດຽວກັນກໍ່ຕາມ ຍັງມີຜູ້ມາຕໍ່ສູ້ຕາມທີ່ ພະເຍຊູ ເຕືອນເຂົາໄວ້ກ່ອນ. ຄົນໃນເຮືອນທີ່ເຂົາໄປປະກາດຕ້ອນຮັບເຂົາຢ່າງໃດ? (ເລືອກ)

ກ. ບາງຄົນຍິນດີຕ້ອນຮັບ.

ຂ. ບາງຄົນບໍ່ຍອມຕ້ອນຮັບຈັກດີ້.

ຄ. ຕ້ອນຮັບດີໝົດທຸກຄົນ.

ງ. ບໍ່ຕ້ອນຮັບຈັກຄົນ.

**19** ພະເຍຊູ ຍົກເລື່ອງຈາກພະຄຳພີເດີມມາປຽບທຽບກັບຄົນທີ່ບໍ່ຍອມຮັບຟັງພະຄຳຂອງ ພະເຈົ້າ. ໃນປະຖົມມະ ການ ບົດ19 ເວົ້າເລື່ອງຫຼານຂອງອັບລາຮາມຊື່ວ່າ ໂລດ ພະເຈົ້າ ພິພາກສາທຳລາຍສອງເມືອງເພາະເຂົາບໍ່ຍອມຟັງຄຳເຕືອນຂອງ ໂລດ. ພະເຍຊູ ບອກວ່າຜູ້ທີ່ບໍ່ຮັບພະທຳເລື່ອງອານາຈັກສະຫວັນ ຈະຖືກພິພາກສາຢ່າງໜັກກວ່າເຂົາ(ມທ 10:15) ສອງເມືອງນັ້ນຄືເມືອງໃດແດ່? ________________________________________

**20** ສະຫາຍເອີຍ ທ່ານເອງກໍ່ຄ້າຍຄືກັບພວກສາວົກເຫຼົ່ານັ້ນ ຖ້າວ່າທ່ານຈະເຮັດຄືເຂົາ

ກ. ທ່ານຈະໄປຢ້ຽມຢາມຄົນຢູ່ໃສ? ________________________________

ຂ. ທ່ານເອງກໍ່ຮຽນຮູ້ເລື່ອງຄຳເທດສະໜາຂອງ ພະເຍຊູ ຢູ່ຈ້າຍ ___________ (ຕື່ມຄວາມ)

ຄ. ຄຳນັ້ນມີຂຽນໄວ້ໃນ ມັດທາຍ ບົດໃດແດ່? ________________________

ງ. ຍິ່ງກວ່ານັ້ນເຮົາໄດ້ຮຽນເລື່ອງການອັດສະຈັນຂອງພະເຍຊູໃນ ມັດທາຍສອງບົດໃດ? ___

ຈ. ພະເຍຊູ ໃຫ້ສາວົກອອກໄປປ່າວປະກາດເປັນໝູ່ລະຈັກຄົນດ້ວຍກັນ? ____________

ສ. ຖ້າວ່າທ່ານຈະເຮັດເຊັ່ນດຽວກັນໃຫ້ທ່ານຊອກຫາໝູ່ອີກຜູ້ໜຶ່ງຈຶ່ງຈະອອກໄປປ່າວປະກາດເປັນຄູ່ກັນ ອາດຈະ ມີບາງຄອບຄົວທີ່ບໍ່ຍິນດີຕ້ອນຮັບແຕ່ຫວັງວ່າຈະພົບຄອບຄົວຢ່າງໃດ?

________________________________________________

ຊ. ຖ້າເຂົາຕ້ອງຮັບໃຫ້ພວກທ່ານໝັ້ນກັບໄປຢ້ຽມຢາມເຂົາອີກເພື່ອຈະກ່າວເຖິງອານາຈັກໃດ?

________________________________________________

*ທ່ານອາດຈະເປີດສອນພະຄຳພີໃຫ້ເຂົາຢ່າງທີ່ຮຽນມາໃນເຫຼັ້ມນີ້ ບົດທີ 11*

**21** ເຖິງວ່າພວກເຮົາບໍ່ໄດ້ຢູ່ໃນຍຸກດຽວກັນກັບສະໄໝອັກຄະສາວົກນັ້ນກໍ່ຕາມ ແຕ່ພວກເຮົາຮຽນຮູ້ເລື່ອງການປ່າວ ປະກາດຕາມບ້ານຕາມເຮືອນຈາກ ພະເຢຊູ ກໍ່ໄດ້. ໃນຄຳຖາມສະຖານະການ 6 ປະການຕໍ່ໄປນີ້ ໃຫ້ທ່ານໝາຍ ອັນໃດທີ່ຖືກ.

ກ. ໃນເມື່ອຈະໄປຢ້ຽມຄົນທີ່ເຮືອນ ຄວນເອົາຈຳນວນຈັກຄົນໄປດ້ວຍກັນດີ?

1. ສອງຄົນ.
2. ຫຼາຍຄົນໄປດ້ວຍກັນ.
3. ຜູ້ດຽວ.

ຂ. ຈະເລີ້ມຕົ້ນປ່າວປະກາດກັບຄົນທີ່ຢູ່ໃສ?

1. ເພື່ອນບ້ານດຽວ.
2. ບ້ານໄກ.
3. ຕ່າງແຂວງ.

ຄ. ຈົ່ງປ່າວປະກາດໃນສະຖານທີ່ແບບໃດກ່ອນ?

1. ຕັ້ງວິຫານໃໝ່ໄວ້ກ່ອນ.
2. ໃນເຮືອນຄົນທີ່ສົນໃຈ.
3. ໃນເຮືອນຄົນທີ່ບໍ່ສົນໃຈ.

ງ. ຖ້າເຂົາບໍ່ພ້ອມຈະຮັບຟັງທ່ານຈະເຮັດຢ່າງໃດຕໍ່ໄປ?

1. ເຂົ້າໄປໃນເຮືອນເຂົາໂດຍບໍ່ໄດ້ຮັບອະນຸຍາດ.
2.ໝົດຫວັງບໍ່ປະກາດຕໍ່ໄປ.
3. ຊອກຫາຄອບຄົວອື່ນ ໆ ທີ່ຈະຟັງ.

ຈ. ຖ້າວ່າພົບຄອບຄົວທີ່ສົນໃຈແລ້ວຄວນຈະເຮັດຫຍັງຕໍ່ໄປ?

1. ອ້ອນວອນເພື່ອເຂົາແລ້ວປະໄວ້.
2. ຊອກຫາໂອກາດມາສອນພະຄຳພີໃຫ້ເຂົາຕໍ່ໄປ.
3. ຈົ່ງສັ່ນຂີ້ຝຸ່ນທີ່ຕິດຕີນຂອງທ່ານອອກເສຍ.

ສ. ຖ້າວ່າທ່ານຕັ້ງຕົ້ນສອນພະຄຳພີໃຫ້ເຂົາຢ່າງສະໝ່ຳ ສະເໝີທ່ານຄວນຈະເຮັດຢ່າງໃດ?

1. ສອນແຕ່ເລື່ອງອານາຈັກສະຫວັນຢ່າງດຽວ.
2. ພຽງແຕ່ອ້ອນວອນເພື່ອຄົນເຈັບຢ່າງດຽວ.
3. ທັງສອນພະຄຳພີແລະອ້ອນວອນດ້ວຍ.
4. ທ່ານສົນທະນາກັບເຂົາຢ່າງດຽວ.

**22** ໃຫ້ທ່ານຄິດເຖິງບ້ານເມືອງຂອງທ່ານເອງ ຖ້າວ່າທ່ານຈະປ່າວປະກາດຂ່າວປະເສີດໃນເຂດຂອງທ່ານເອງນັ້ນຈະ ເຮັດຢ່າງໃດ? ໃຫ້ທ່ານອ້ອນວອນຊອກຫາການຊີ້ນຳຈາກພະວິນຍານບໍລິສຸດແລະຈິດແຜນການໄວ້ຕໍ່ໄປນີ້: ______________________________________

_______________________________________________________________

_______________________________________________________________

_______________________________________________________________

## ເລື່ອງການຕໍ່ສູ້ທີ່ຕ້ອງເກີດຂຶ້ນ

*ໃຫ້ທ່ານອ່ານ ມັດທາຍ 10:16-23*

**23** ຖ້າວ່າພວກເຮົາປະຕິບັດຕາມຄຳສັ່ງຂອງ ພະເຢຊູ ແລ້ວອອກໄປປ່າວປະກາດຂ່າວປະເສີດຕາມບ້ານເຮືອນຈະມີ ບາງຄົນຮັບເຊື່ອຢູ່ ແລະ ຈະມີອີກບາງຄົນທີ່ຈະບໍ່ເຊື່ອ ຍິ່ງກວ່ານັ້ນຈະມີບາງຄົນທີ່ຕໍ່ສູ້. ຜົນຮັບຂອງການປ່າວປະກາດອັນ ນີ້ງທີ່ ບໍ່ດີຄືຈະມີບາງຄົນເຮັດຫຍັງ? _____

**24** ໃນ ກິຈະການ 14:22 ບອກວ່າ "ເຮົາທັງຫຼາຍຈຳເປັນຕ້ອງຜ່ານຄວາມ _______________ ຫຼາຍປະການ" (ຕື່ມຄວາມທີ່ຂາດ)

**25** ການປ່າວປະກາດພະທຳຂອງພະອົງບໍ່ເປັນການມ່ວນຊື່ນ ແຕ່ເປັນການສົງຄາມດ້ານວິນຍານ.

ກ. ໃຫ້ທ່ານອ່ານ ມັດທາຍ 10:24 ຂ້ອຍໃຊ້ບໍ່ໃຫຍ່ກວ່າໃຜ? ______________________

ຂ. ຜົນສຸດທ້າຍຂອງ ພະເຢຊູ ໃນສະພາບເປັນມະນຸດເປັນຢ່າງໃດ? _________________

ຄ. ໃນ ມັດທາຍ 10:18 ພະເຢຊູ ບອກວ່າພວກສາວົກຈະຖືກພາໄປຫາໃຜເພາະເຫັນແກ່ພະອົງ? __________________________________________________________

| ໃຫ້ທ່ານເອົາສໍສີແດງຂີດກ້ອງຄຳ "ກະສັດ" ໃນ ມັດທາຍ 10:18 |
|---|

**26** ການທຸກຍາກລຳບາກມາຈາກຫຼາຍດ້ານກໍ່ມີ ໃຫ້ທ່ານອ່ານຈາກ ມັດທາຍ 10:16-23 ອີກ

ກ. ທີ່ເຂົາຈະພາພວກທ່ານໄປຫາເຈົ້າເມືອງແລະກະສັດເຫັນໃນຂໍ້ໃດ? _______________

ຂ. ຄົນທັງປວງຈະກຽດຊັງພວກທ່ານເຫັນໃນຂໍ້ໃດ? _____________________________

ຄ. ເຂົາຈະຂ້ຽນທ່ານໃນໂຮງທຳມະເທດສະໜາເຫັນໃນຂໍ້ໃດ? ____________________

ງ. ອ້າຍກັບນ້ອງຕ່າງຄົນຈະມອບກັນໄວ້ ພໍ່ຈະມອບລູກແລະລູກຈະຕໍ່ສູ້ພໍ່ໃນຂໍ້ໃດ? _______

**27** ການຕໍ່ສູ້ທີ່ມາຈາກທາງ 4 ດ້ານນັ້ນກໍສະແດງເຖິງການຕໍ່ສູ້ 4 ຢ່າງ ຄື:

ກ. ການຕໍ່ສູ້ຈາກປະຊາຊົນທົ່ວໄປ.

ຂ. ການຕໍ່ສູ້ຈາກສາດສະ ໜາອື່ນ.

ຄ. ການຕໍ່ສູ້ຈາກຜູ້ປົກຄອງ.

ງ. ການຕໍ່ສູ້ຈາກຍາດພີ່ນ້ອງ.

ໃນ 4 ຢ່າງເຫົ່ງນັ້ນ ມທ 10:17 ເຕືອນເລື່ອງຫຍັງ? ______________________________

ມທ 10:18 ເດ? ______________________________

ມທ 10:21 ເດ? ______________________________

ມທ 10:22 ເດ? ______________________________

**28** ການຕໍ່ຕ້ານພວກຄຼິດສະຕຽນມີຢູ່ 4 ຢ່າງໃດແດ່?

______________________________

______________________________

______________________________

______________________________

**29** ໃນມທ 10:20 ເຮົາມີຜູ້ໃດທີ່ອາໄສໄດ້ໃນເມື່ອພົບການຕໍ່ສູ້? ______________________

**30** ໃນ ມັດທາຍ 10:19-20 ຄຳທີ່ ພະເຍຊູ ບອກວ່າ ຢ່າອຸກໃຈເລື່ອງຈະເວົ້າອັນໃດໜ່າຫຍັງ? ເລືອກ

ກ. ເຮົາບໍ່ຕ້ອງຕຽມຕົວກ່ອນຈະເທດສະໜາ.

ຂ. ເຮົາບໍ່ຕ້ອງຝຶກຝົນກໍ່ເປັນຜູ້ນຳຄຼິດສະຕະຈັກໄດ້.

ຄ. ຄັນເຮົາພົບການຕໍ່ສູ້ດ້ວຍບໍ່ຮູ້ກ່ອນ ພະວິນຍານຈະຊ່ອຍໃຫ້ເຮົາຕອບຕໍ່ຜູ້ທີ່ກ່າວຫາເຮົາ.

**31** ກ. ຄົນນອກບໍ່ຮັບຮູ້ອຳນາດຂອງພະວິນຍານ ມັດທາຍ 10:25 ບອກວ່າຄົນນອກເຂົາຈະເອີ້ນເຮົາວ່າຫຍັງ? ______________________________

ຂ. ເຈົ້າເຮືອນນັ້ນແມ່ນປຽບກັບໃຜ? ______________________________

ຄ. ໄທເຮືອນນັ້ນປຽບກັບໃຜ? ______________________________

**32** ໃຫ້ທ່ານປຽບ ມທ 10:25 ທີ່ວ່າເລື່ອງ “ເບເອນເຊບູນ” ກັບ ມທ 9:34 ນາຍຜີ ມີອີກຊື່ໜຶ່ງວ່າຫຍັງ? ______________________________

**33** ຜູ້ທີ່ເຊື່ອໃນ ພະເຍຊູ ອາດຈະມີຜູ້ມາຕໍ່ສູ້ຈາກ 4 ດ້ານໃດ?

______________________ ______________________

______________________ ______________________

## ຈະປະເຊີນໜ້າຜູ້ຕໍ່ສູ້ຢ່າງໃດ

**34** ໃຫ້ທ່ານອ່ານ ມທ 10:26-33

ສົມຄວນທີ່ຈະເຂົ້າໃຈຕອນພະຄຳພີນີ້ ເພາະມີຄວາມສອນຢ່າງໃດ? (ເລືອກ)

ກ. ການຕໍ່ສູ້ນັ້ນອາດຈະໜັກຈົນເຮົາຈະຕົກໃນບາບ.

ຂ. ຄົນທີ່ເຊື່ອໃນ ພະເຍຊູ ຈະທົນໄດ້ເຖິງຕາຍກໍ່ຕາມ.

ຄ. ຄົນຄຼິດສະຕຽນຈະບໍ່ພົບການຂົ່ມເຫັງໜັກຈັກເທື່ອ.

**35** ກ. ໃນ ມັດທາຍ 10:28 ເຮົາຈະບໍ່ຢ້ານໃຜ? ______________________________

ຂ. ສົມຄວນຈະຢ້ານໃຜ? ______________________________

ຄ. ເຖິງຄົນຈະຕໍ່ສູ້ກໍ່ຕາມເຮົາຄວນຈະຮັບພະອົງຕໍ່ໜ້າມະນຸດເພື່ອຫຍັງ? (ມທ 10:32)

______________________________

**36** ໃນ ມັດທາຍ ບົດ 10 ພະເຍຊູ ຍົກຄວາມປຽບທຽບມາຫຼາຍປະການຄື:

ມທ 10:15 ເມືອງໂຊໂດມ ແລະ ເມືອງໂກໂມລາ

ມທ 10:16 ແກະ

ມທ 10:16ໝາໄນ

ມທ 10:16 ງູ ແລະ ນົກເຂົາ

ມທ 10:29 ນົກຈອກ

ມທ 10:38 ໄມ້ກາງແຂນ

ມທ 10:42 ນ້ຳເຢັນຈອກໜຶ່ງ

ໃນຄຳປຽບທຽບ 7 ປະການນັ້ນອັນໃດໝາຍເຖິງ:

ກ. ຄົນໂລກທີ່ພ້ອມໃຈຈະຕໍ່ສູ້ຄົນທີ່ເຊື່ອ? ______________________________

ຂ. ຄຶດສະຕຽນທີ່ຮັບການຂົ່ມເຫັງ? ______________________________

ຄ. ການທຳລາຍຄົນທີ່ບໍ່ຮັບພະທຳຂອງ ພະເຈົ້າ? ______________________________

ງ. ຄວາມສະຫຼາດແລະຄວາມອ່ອນສຸພາບຂອງພວກຄຶດສະຕຽນ? ______________________________

ຈ. ຄຶດສະຕຽນທີ່ບໍ່ສາມາດປ້ອງກັນຮັກສາຕົວເອງ? ______________________________

ສ. ການສະລະຕົວຂອງຄຶດສະຕຽນ? ______________________________

ຊ. ການສະລະຕົວຢ່າງນ້ອຍທີ່ສຸດ ຍັງຈະໄດ້ລາງວັນແມ່ນຫຍັງ? ______________________________

| |
|---|
| ກ່ອນທີ່ເຮົາຈະຈົບລົງໃນບົດຮຽນນີ້ ເຮົາຈະຮຽນຄືນໜ້ອຍນຶ່ງເລື່ອງ ຕອນເພີ່ມສອງຕອນໃນ ບົດທີ 10 ນັ້ນອີກສອງຕອນນັ້ນອ້າງເຖິງເລື່ອງ ພະເຍຊູ ສອນພວກສາວົກກ່ອນຈະອອກໄປ. ໃຫ້ທ່ານກັບໄປເບິ່ງໂຄງຮ່າງ ກ່ອນຄຳຖາມ 1 ອີກ. |

**37** ໃຫ້ທ່ານຮຽນຕອນພະຄຳເພີ່ມ ກ ໃນ ມັດທາຍ 10:34-39 ແລະອີກຕອນເພີ່ມ ຂ ໃນ ມັດທາຍ 10:40-42

ກ. ຕອນເພີ່ມໃດ ສອນເລື່ອງດຽວກັນກັບ ມທ 10:12-15? ______________________________

ຂ. ຕອນເພີ່ມໃດວ່າກ່ຽວເລື່ອງດຽວກັນກັບ ມທ 10:21? ______________________________

**38** ເຮົາຮຽນມາແລ້ວເລື່ອງການຕໍ່ສູ້ 4 ຢ່າງ ມັດທາຍ 10:34-39 ເວົ້າເຖິງການຕໍ່ສູ້ຢ່າງໃດ?

______________________________

**39** ໃນໂຄງຮ່າງຕໍ່ໄປນີ້ ໃຫ້ຕື່ມຄວາມໃດທີ່ຂາດ
(ໃຊ້ພະຄຳພີກໍ່ໄດ້ ແຕ່ຢ່າກັບໄປເບິ່ງແຕ່ຕົ້ນບົດຮຽນນີ້)

1. ການໄປຢຸ້ຽມຄົນໃນ ____________________ ມທ 10: ___________________
2. ການ ______________________ ມທ 10: ___________________
3. ຈະປະເຊີນໜ້າຜູ້ _____________________ ມທ 10: ___________________

ຕອນເພີ່ມ ກ ມທ 10: ___________________

ຕອນເພີ່ມ ຂ ມທ 10: ___________________

**40** ສ່ວນທ່ານເອງ ຄຳສັ່ງສອນຂອງ ພະເຢຊູ ປະການໃດເປັນທີ່ຊ່ອຍທ່ານໃຫ້ມີໃຈກ້າຫານເພື່ອຈະພົບກັບການຕໍ່ສູ້ ຕ່າງໆ? ________________________________________________

_________________________________________________________________

_________________________________________________________________

ໃຫ້ທ່ານຍົກຕົວຢ່າງຜູ້ມາຕໍ່ສູ້ໃນຊີວິດຂອງທ່ານເອງຫຼືຊີວິດຂອງຜູ້ອື່ນ. _______________

_________________________________________________________________

_________________________________________________________________

*ຢ່າລືມບົດເສັງ*

| ຄຳຕອບ: | | | | |
|---|---|---|---|---|
| **1** | *ກ. ຊາດຢິວຂອງເຂົາເອງ.* | *ຂ. 6 ຄູ່* | | |
| **2** | *ກ. ເຈົ້າເມືອງແລະກະສັດ.* | *ຂ. ບໍ່ເປັນຊາດຢິວ* | *ຄ. ທຸກຊາດ.* | |
| **3** | *ກ. ຊາດຢິວ.* | *ຂ. ທຸກຊາດ.* | | |
| **4** | *"ລາຊະອານາຈັກສະຫວັນມາໃກ້ແລ້ວ"* | | | |
| **5** | *ກ. ປະກາດ.* | *ຂ. ອັດສະຈັນ.* | | |
| **6** | *ກ. ມັດທາຍ ບົດ 5-7* | *ຂ. ມທ ບົດ 8-9* | | |
| **7** | *ກ. ຂໍ້ 1-12* | *ຂ. ຂໍ້ 5-15* | *ຄ. ຂໍ້ 1-6* | |
| **8** | *ຂໍ້ 5-7* | | | |
| **9** | *ກ. ມທ 8:5-13* | *ຂ. ມທ 5:44* | | |
| **10** | *ກ. ພະເຢຊູ* | *ຂ. ບົດ 5-7* | *ຄ. ການອັດສະຈັນ.* | *ງ. ບົດ 8-9* |
| **11** | *ກ. ຂໍ້ 7* | *ຂ. ຂໍ້ 8* | | |
| **12** | *ຄ. ຖືກ* | | | |
| **13** | *ກ. ຂໍ້ 19-21* | *ຂ. ບໍ່ມີ.* | | |
| **14** | *ຈຳເປັນຕ້ອງເສຍສະລະຊັບສິນບັດໄວ້ເພື່ອອານາຈັກ ສະຫວັນ. (ຫຼື ຄຳຄ້າຍຄືກັນນີ້ກໍ່ໄດ້)* | | | |
| **15** | *ບ້ານຄົນ.* | | | |
| **16** | *ກ. ມັດທາຍ.* | *ຂ. ເປໂຕ.* | | |

**ຄຳຕອບ (ຕໍ່):**

**17** *ກ. ໂປໂລ ຂ. ຕາມບ້ານເຮືອນເຊັ່ນດຽວກັນ.*

**18** *ກ. ແລະ ຂ. ຖືກ*

**19** *ໂຊໂດມ, ໂກໂມລາ*

**20** *ກ. ບ້ານເຮືອນ ຂ. ພູ ຄ. ບົດ 5-7 ງ. ບົດ 8-9 ຈ. ສອງຄົນ*
*ສ. ຍິນດີຕ້ອງຮັບ ຊ. ອານາຈັກສະຫວັນ.*

**21** *ກ. 1 ຖືກ ຄ. 2 ຖືກ ຂ. 1 ຖືກ ງ. 3 ຖືກ ຈ. 2 ຖືກ ສ. 3 ຖືກ*

**22** *ບໍ່ມີຄຳຕອບຕາຍຕົວ ໃຫ້ແລກປ່ຽນຄວາມ ຄິດເຫັນກັບໝູ່ໃນປະຊຸມ.*

**23** *ຕໍ່ສູ້*

**24** *ທຸກລຳບາກ.*

**25** *ກ. ນາຍ ຂ. ຕາຍທີ່ໄມ້ກາງແຂນ ຄ. ເຈົ້າເມືອງແລະກະສັດ.*

**26** *ກ. ຂໍ້ 18 ຄ. ຂໍ້ 17 ຂ. ຂໍ້ 22 ງ. ຂໍ້ 21*

**27** *ມທ 10:17 ຖືກກັບ ຂ. ມທ 10:18 ຖືກກັບ ຄ.*
*ມທ 10:21 ຖືກກັບ ງ. ມທ 10:22 ຖືກກັບ ກ.*

**28** *ປະຊາຊົນ ສາດສະໜາ ຜູ້ປົກຄອງ ຍາດພີ່ນ້ອງ*

**29** *ພະວິນຍານບໍລິສຸດ.*

**30** *ຄ. ຖືກ*

**31** *ກ. ເບເອນເຊບູນ ຂ. ພະເຢຊູ ຄ. ຜູ້ຕິດຕາມພະອົງ*

**32** *ເບເອນເຊບູນ*

**33** *ປະຊາຊົນ ສາດສະໜາ ຜູ້ປົກຄອງ ຍາດພີ່ນ້ອງ.*

**34** *ຂ. ຖືກ*

**35** *ກ. ຢ່າຢ້ານຜູ້ທີ່ຂ້າໄດ້ແຕ່ຮ່າງກາຍ.*
*ຂ. ຈົ່ງຢ້ານຜູ້ມີລິດໃຫ້ຈິບຫາຍໃນ ໝົ້ນາລົກ (ຄື ພະເຈົ້າ)*
*ຄ. ເພື່ອພະອົງຈະຮັບເຮົາຕໍ່ພະພັກພະບິດາ*

**36** *ກ. ໝາໄນ. ຂ. ແກະ. ຄ. ເມືອງໂຊໂດມແລະໂກໂມລາ. ງ. ງູ ແລະ ນົກເຂົາ.*
*ຈ. ນົກຈອກ. ສ. ໄມ້ການແຂນ. ຊ. ນ້ຳເຢັນຈອກ ໜຶ່ງ.*

**37** *ກ. ມທ 10:40-42 ຂ. ມທ 10:34-39*

**38** *ການຕໍ່ສູ້ຈາກຍາດພີ່ນ້ອງ.*

**39** *1. ໃນບ້ານ ຂໍ້ 5-15*
*2. ຕໍ່ສູ້ ຂໍ້ 16-25*
*3. ຕໍ່ສູ້ຢ່າງໃດ ຂໍ້ 26-33 ຂໍ້ 34-39 ຂໍ້ 40-42*

**40** *ບໍ່ມີຄຳຕອບຕາຍຕົວ*